ບົດຮຽນໂຮງຮຽນວັນອາທິດ

ວັນອາທິດທີ ກໍຣະກະດາ 6 2008 (7-6-2008)

## ໃຜແທ້ເປັນຜູ້ປົກຄອງ

**ຂໍ້ພຣະຄັມພີໃນບົດຮຽນ:** ພຣະນິມິດ 5: 1-15

**ຄໍາຖາມຊີວິດ:** ໃຜແທ້ທີ່ມີອໍານາດເຫນືອເຫດການທັງປວງໃນໂລກ ?

**ພຣະຄັມພີແຫ່ງຄວາມຈິງ:** ເພາະພຣະເຢຊູຄຣິດໄດ້ພິຊິດຄວາມຕາຍ, ພຣະອົງມີສິດອໍານາດ ພວກເຮົາທຸກຄົນທີ່ເຊື່ອແລະວາງໃຈໃນພຣະອົງກໍຈະມີຊັຍຊະນະເຫນືອນກັນ.

**ນໍາໃຊ້ໃນຊີວິດ** ບົດຮຽນນີ້ຈະຊ່ວຍໃຫ້ທ່ານດໍາເນີນຊີວິດດ້ວຍຄວາມໝັ້ນໃຈໂດຍ:

- ຮຽນຮູ້ເຖິງເຄັດລັບວ່າເປັນຫຍັງເຫດການຕ່າງໆທີ່ເກີດຂື້ນຈຶ່ງບໍ່ມີຊັຍຊະນະເໜືອນອົງພຣະເຢຊູຄຣິດໄດ້,
- ແລະຍັງຈະຊ່ວຍໃຫ້ພວກເຮົາມີພະລັງທີ່ຈະຢືນໝັ້ນ ເປັນຂ້າໃຊ້ທີ່ສັດຊື່ບໍ່ວ່າມີຫຍັງຈະເກີດຂື້ນ.

### ໃຜແທ້ທີ່ມີສິດຄວບຄຸມ

ຫລັງຈາກການສໍາຣວດຂອງທ່ານຫມໍ ເພິ່ນບອກຂ້າພະເຈົ້າວ່າ "ຫມາກໄຂ່ຫລັງຂອງທ່ານບໍ່ທໍາງານແລ້ວ" ຂ້າພະເຈົ້າໃຊ້ເວລາຫຼາຍອາທິດຊອກຫາຄໍາຕອບ. ບາງຄົນກໍປະເຊີນອະນາຄົດດ້ວຍຄວາມກັງວົນ ບາງຄົນເຫັນວ່າອະນາຄົດເປັນສິ່ງທີ່ມືດມົວ. ທ່ານເດ ອັນໃດເປັນສາເຫດທີ່ເຮັດໃຫ້ທ່ານມີຄວາມຫວັງໃນອະນາ ຄົດ? ຄົນໃດຫຼືສິ່ງໃດທີ່ຈະຊ່ວຍໃຫ້ທ່ານກ້າວໄປສູ່ອະນາຄົດດ້ວຍຄວາມຫມັ້ນໃຈ?

ຄວາມຫວັງທີ່ເຊື່ອໃນອົງພຣະເຢຊູຄຣິດຈະຕັ້ງຫມັ້ນຄົງຢູ່ຕລອດໄປ. ບົດຮຽນນີ້ຈະຊ່ວຍໃຫ້ເຮົາຫມັ້ນໃຈໃນພຣະອົງແລະຍັງຈະຊ່ວຍໃຫ້ຜູ້ທີ່ຫວັງໃນພຣະອົງມີໃຈກ້າທີ່ຈະປະກາດຂ່າວປະເສີດແກ່ຄົນອື່ນທີ່ກໍາລັງປະເຊີນພະຍຸຊີວິດຢູ່.

### ສຶກສາພຣະຄັມພີ

**1. ເພັ່ງເບິ່ງພຣະເຢຊູຄຣິດ:** ( ພຣະນິມິດ 5:1-7)

ນິມິດທ່ານໂຢຮັນເລີ້ມຕົ້ນຈາກພຣະຣາຊບັນລັງຂອງພຣະເຈົ້າຊຶ່ງເປັນສູນບັນຊາການສູງສຸດໃນຟ້າສວັນ ແລະເທິງແຜ່ນດິນໂລກ. "...ມີທ່ານອົງນຶ່ງປະທັບຢູ່ເທິງບັນລັງນັ້ນ (ພຣະນິມິດ4:2) ທຸກຄົນທີ່ຢູ່ອ້ອມພຣະຣາຊບັນລັງນັ້ນກໍພາກັນໂມທະນາພຣະຄຸນ ແລະສັຣເສີນພຣະອົງຕລອດເວລາ (ພຣະນິມິດ 4:11). ໂຢຮັນເຫັນໜັງສືມ້ວນເຫຼັ້ມນຶ່ງໃນພຣະຫັດຂອງພຣະອົງຜູ້ປະທັບເທິງບັນລັງນັ້ນ. " ມີຄໍາຂຽນທັງຂ້າງໃນແລະນອກ" ຊີ້ໃຫ້ເຫັນວ່າມີຫຼາຍຢ່າງທີ່ຖືກຂຽນ ໄວ້ ແລະກໍາລັງຈະເກີດຂຶ້ນ ( ຂໍ້ 1 ).

ເທວະດາອົງຊົງຣິດປ່າວປະກາດວ່າຊອກຫາຜູ້ທີ່ເຫມາະສົມທີ່ຈະແກະຕຣາປະທັບຈາກໜັງສືມ້ວນນັ້ນ. ເມື່ອເຫັນວ່າບໍ່ມີຄົນໃດທົ່ວພິພົບດີພໍ ຈຶ່ງເຮັດໃຫ້ໃຫ້ໂຢຮັນຮ້ອງໄຫ້ເສັຽໃຈ. ໂຢຮັນບໍ່ແມ່ນຄົນດຽວທີ່ໂສກເສົ້າເສັຽໃຈຍ້ອນວ່າບໍ່ມີຄວາມຫວັງໃນອານາຄົດ. ສໍາລັບພວກເຮົາແລ້ວທຸກສິ່ງຢ່າງຢູ່ໃນພຣະຫັດຂອງພຣະອົງຜູ້ດຽວ.

ຢ່າຮ້ອງໄຫ້ເລີຍ, ເບິ່ງແມ ພຣະອົງຜູ້ຊົງຖືກຄຶງໄວ້ແລ້ວຊົງຄືນພຣະຊົນ ແລະຊົງຮັບການຍົກຂຶ້ນ. ຄໍາທໍານວາຍທັງຫມົດລວມທັງພັນທະສັນຍາເດີມທີ່ໄດ້ກ່າວເຖິງ ໄດ້ສໍາເຣັດໃນພຣະອົງ.

ພຣະອົງເປັນ (1)ສິງຫນຸ່ມ ແລະເປັນຮາກແຫງ້ຳຂອງກະສັດດາວິດ, (2) ລູກແກະທີ່ຖືກຂ້າແລ້ວ (ເບິ່ງ ປະຖົມມະການ 49:8-10). ຜູ້ຮັບໃຊ້ທີ່ເອຊາຢາກ່າວເຖິງ ໄດ້ປະສົບກັບຄວາມທຸກທໍຣະມານ, ແລະບັດນີ້ໄດ້ຊົງຖືກຍົກຂຶ້ນ

ຢ່າງຜູ້ມີໄຊ. ອົງພຣະເຢຊູຄຣິດໄດ້ພິຊິດຄວາມບາບ, ພະຍາມານ, ຄວາມຕາຍ, ແລະນະຣົກ ດ້ວຍການວາຍພຣະຊົນ ແລະຄືນພຣະຊົນຂອງພຣະອົງ. ໃນບັດນີ້ພຣະອົງພ້ອມແລ້ວທີ່ຈະເປີດເຜີຍອອກໃຫ້ທົ່ວໂລກຈັກະວານຮູ້ວ່າພຣະອົງນີ້ລະເປັນພຣະມະຫາກະສັດຜູ້ຍິ່ງໃຫຍ່ ເປັນຜູ້ຖືອະນາຄົດແລະສັພສິ່ງທັງປວງໄວ້ໃນພຣະຫັດຂອງພຣະອົງ. ພຣະອົງໄດ້ຈັບເອົາຫນັງສືມ້ວນນັ້ນຈາກພຣະຫັດເບື້ອງຂວາຂອງພຣະອົງຜູ້ປະທັບເທິງມະຫາບັນລັງນັ້ນ.

ນິມິດຂອງພຣະເມສານ້ອຍທີ່ທ່ານໂຢຮັນເຫັນນັ້ນ ຈະຊ່ວຍໃຫ້ເຮົາເຫັນພຣະຜູ້ໂຜດໃຫ້ພົ້ນຂອງພວກເຮົາດີຍິ່ງຂຶ້ນ. ເຈັດເຂົາເທິງພຣະສຽນ ຫມາຍເຖິງຣິດທານຸພາບອັນສົມບູນຂອງພຣະອົງ. ແລະພຣະເນດເຈັດດວງຫມາຍເຖິງຄວາມຮອບຮູ້ອັນບໍ່ມີຂອບເຂດຂອງພຣະອົງ. ເຫດສະນັ້ນ ມັນເປັນການສົມຄວນແລ້ວ ທີ່ພວກເຮົາຈະໄວ້ວາງໃຈມອບທຸກສິ່ງຢ່າງ ລວມທັງຊີວິດຈິດວິນຍານ ໄວ້ໃນພຣະຫັດຂອງພຣະອົງ ບໍ່ວ່າຈະມີຫຍັງເກີດຂຶ້ນ.

ຫນັງສືມ້ວນທີ່ມີຕຣາປະທັບເຈັດອັນ ເປັນຫນັງສືບັນທຶກເຫດການຕ່າງໆ ທີ່ຈະເກີດຂຶ້ນໃນວາຣະສຸດທ້າຍ. ຕຣາປະທັບ ສຽງແກແລະຂັນທັງເຈັດ ສະແດງໃຫ້ເຫັນເຖິງພັຍວິບັດຕ່າງໆ ທີ່ກຳລັງຈະເກີດຂຶ້ນກັບມວນມະນຸດແລະສັພສິ່ງຈົນເຖິງວັນທີ່ພຣະອົງຈະສະເດັດກັບມາດ້ວຍສະງ່າຣາສີຂອງພຣະອົງ. ຕາບໃດທີ່ຍັງມີຊີວິດຢູ່ໃນໂລກນີ້ ທຸກໆຄົນຈະຕ້ອງປະເຊີນແລະສູ້ທົນກັບພັຍອັນຕະລາຍ ແລະບັນຫາຕ່າງໆ ລວມທັງຄຣິສຕຽນດ້ວຍ.

ບໍ່ເຫມືອນທ່ານໂຢຮັນ, ພວກເຮົາບໍ່ໄດ້ຮ້ອງໄຫ້ຮ່ຳໄຮ. ພວກເຮົາມີສາເຫດທີ່ເຮັດໃຫ້ພວກເຮົາດຳເນີນຊີວິດຢ່າງຫມັ້ນໃຈ ເພາະເຮົາຮູ້ວ່າທັງຊີວິດ ແລະອະນາຄົດຂອງພວກເຮົາທັງຫມົດ ຢູ່ໃນພຣະຫັດຂອງພຣະອົງ. ຣາຊກິດທີ່ພຣະອົງຊົງກະທຳຢ່າງລູກແກະນ້ອຍເທິງໄມ້ກາງແຂນ ເຮັດໃຫ້ພຣະອົງຖືກຍົກຂຶ້ນໃຫ້ເປັນຣາຊສີຂອງຢູດາ. ດັ່ງທີ່ອາຈານໂປ ໂລຂຽນໄວ້: ເພາະພຣະອົງຊົງຍອມເຊື່ອຟັງຈົນເຖິງຄວາມຕາຍເທິງໄມ້ກາງແຂນ, ພຣະເຈົ້າຈຶ່ງຊົງຍໍຍົກເພິ່ນຂຶ້ນ... ທຸກໆ ຫົວເຂົ່າຈະຄູ້ລົງ....ແລະທຸກໆລີ້ນຈະສາລະພາບວ່າອົງພຣະເຢຊູຄຣິດຊົງເປັນອົງພຣະຜູ້ເປັນເຈົ້າ (ຟີລິບປອຍ 2:9-11)

**2 <u>ປົກຄອງຮ່ວມກັບພຣະເຢຊູ</u>** (ພຣະນິມິດ 5:8-10)

ເມື່ອຫນັງສືມ້ວນນີ້ໄດ້ຖືກມອບໄວ້ໃນພຣະຫັດອັນຊົງຣິດຂອງພຣະເມສານ້ອຍ ຟ້າສວັນກໍພ້ອມກັນຍົກສຽງຂຶ້ນສັຣເສີນພຣະເຈົ້າດ້ວຍຄວາມຊົມຊື່ນຍິນດີ. ສັດທັງສີ່ໂຕ ພ້ອມທັງຜູ້ອາວຸໂສຊາວສີ່ທ່ານ ກໍນ້ອມໂຕລົງພື້ນສຽງພິນກໍບັນເລງເພງສັຣເສີນ ຖ້ວຍຄຳທີ່ເຕັມດ້ວຍເຄື່ອງຫອມ ຄືຄຳພາວັນນາ(ອ້ອນວອນ)ຈາກໄພ່ພົນຂອງພຣະເຈົ້າກໍຖືກນຳມາຖວາຍຕໍ່ພຣະພັກພຣະເມສານ້ອຍ. ຄຳໄຫວ້ວອນຂອງໄພ່ພົນຂອງພຣະອົງມີຄວາມສຳຄັນຫຼາຍຈົນທູດສວັນເອົາໃສ່ຖ້ວຍຄຳແລ້ວນຳມາຖວາຍແດ່ພຣະອົງ. (ໃນຂໍ້4) ພວກຜູ້ອາວຸໂສທັງຊາວສີ່ທ່ານ ຖວາຍການສັຣເສີນພຣະເມສານ້ອຍໃນການທີ່ພຣະອົງໄດ້ສະລະພຣະອົງເອງເປັນຄ່າໄຖ່ (ຂໍ້11) ພວກເພິ່ນຖວາຍການສັນເສີນທີ່ພຣະເມສານ້ອຍໄດ້ປົດປ່ອຍອອກຈາກຄວາມບາບ (5:9-10) ບົດເພງໃຫມ່ໃນຂໍ້ 9 ພຣະອົງຊົງເປັນເປັນຜູ້ເຫມາະສົມຈະຊົງຮັບມ້ວນຫນັງສື ແລະແກະຕຣາມ້ວນຫນັງສືອອກ. ບົດເພງໃຫມ່ໄດ້ກ່າວເຖິງການທີ່ພຣະອົງໄດ້ຊົງສະລະພຣະອົງເປັນຄ່າໄຖ່ບາບແກ່ຜູ້ຄົນທັງຫຼາຍດ້ວຍເລືອດຂອງພຣະອົງ. (ມັດທາຍ 2:28)(1ໂກຣິນໂທ 11:25)(ເຮັບເຣີ 8:7-13) ນີ້ຄືໄຊຊະນະໃນອົງພຣະເຢຊູຄຣິດ ( ພຣະນິມິດ 5:5 ) ໄຊຊະນະຂອງພຣະອົງນັ້ນຈຶ່ງເປີດຫນັງສືມ້ວນນັ້ນອອກໄດ້. ດ້ວຍເລືອດຂອງພຣະນັ້ນໄດ້ໄຖ່ເອົາຄົນບາບຢ່າງພວກເຮົາເປັນຈຳນວນຫລວງຫຼາຍເຫຼືອຄະນານັບ. ເຮັດໃຫ້ເຮົາໄດ້ມີສ່ວນຮວມອານາຈັກຂອງພຣະອົງ. ຄຳວ່າ "ແລກ ຫຼື ໄຖ່" ແມ່ນອອກມາຈາກພາສາຕລາດ ມີຄວາມຫມາຍວ່າອັດຕຣາທີ່ຊື້ມາ. ເພື່ອທຳຄວາມເຂົ້າໃຈໃຫ້ຄັກແນ່ນັ້ນ ເທິງໄມ້ກາງແຂນອົງພຣະເຢຊູຄຣິດ "ໄດ້ແລກ ຫຼື ໄຖ່" ຖ້າຢາກໃຫ້ຖືກຕ້ອງຕາມພາສາຕລາດແມ່ນໄດ້ ຊື້ເອົາເຮົາອອກມາຈາກຕລາດແຫ່ງຄວາມບາບ ແລະຊື້ດ້ວຍໂລຫິດຫຼືເລືອດຂອງພຣະອົງເອງ.

ການໃຊ້ຊີວິດຢູ່ດ້ວຍຄວາມຫມັ້ນໃຈແລະຄວາມລະມັດລະວັງຈະເຮັດໃຫ້ເຮົາເຕີບໃຫ່ຍຂຶ້ນໃນອົງພຣະຄຣິດ ແລະຊ່ວຍໃຫ້ເຮົາຫລຸດພົ້ນອອກຈາກການຕາຍໃນຄວາມບາບຂອງເຮົາ ບໍ່ພຽງແຕ່ເທົ່ານັ້ນ ພຣະເຈົ້າຍັງນຳເຮົາຖວາຍເປັນເຄື່ອງບູຊາເຂົ້າສູ່ອານາຈັກສວັນຂອງພຣະເຈົ້າດ້ວຍພຣະປະສົງຂອງພຣະອົງອີກດ້ວຍ.

ໃນອານາຈັກຂອງພຣະເຈົ້າ ຜູ້ທີ່ເຊື່ອດຳລົງຊີວິດຢູ່ໃນຄວາມຫມັ້ນຄົງກັບພຣະອົງ ແລະເຊື່ອຢ່າງຕາຍໃຈໃນຄຳ

ໝັ້ນສັນຍາຂອງພຣະອົງວ່າຈະໄດ້ຮັບຄວາມຊົມຊື່ນຍິນດີ. ໃນຄຳວ່າ " ດຽວນີ້ " ຜູ້ທີ່ເຊື່ອມີສິດທິພິເສດເຂົ້າສາມັກຄີທັມນຳພຣະເຈົ້າ. ທ່ານມີສິດທິພິເສດຈາກພຣະເຈົ້າທີ່ຈະໄກ່ເກັ່ຽຜູ້ໃດຜູ້ນຶ່ງໃຫ້ເຈົ້າມາຮູ້ຈັກກັບພຣະເຈົ້າ ບົດເພງໃໝ່ຂອງຜູ້ອາວຸໂສໄດ້ຊີ້ໃຫ້ເຫັນວ່າ ອະນາຄົດຂ້າງໜ້ານັ້ນແມ່ນດີຫລາຍເພາະພວກເຂົາຈະຮວມເຂົ້າໃນອານາຈັກຂອງພຣະເຈົ້າ. ແລະເວລານີ້ພວກເຂົາໄດ້ຢູ່ນຳພຣະເຈົ້າ ແລະພວກເຂົາຮູ້ວ່າອະນາຄົດຈະເປັນດັ່ງນັ້ນແທ້. ໄພ່ພົນຂອງພຣະເຈົ້າຈະໄດ້ຮັບຢ່າງແນ່ນອນໃຈວ່າເຂົ້າຈະມີຊັຍຮ່ວມກັບພຣະຄຣິດທັງໃນໂລກນີ້ແລະໂລກໜ້າ ພຣະຄຣິດໄດ້ຊົງໄຖ່ເອົາ ພວກ ເຮົາໄວ້ໃຫ້ກັບພຣະເຈົ້າແລ້ວ. ເຖິງແມ່ນວ່າເຮົາຈະຕົກເຂົ້າໃນການທົດລອງ ພວກເຮົາກໍຍັງມີຄວາມເຊື່ອແລະຄວາມຫວັງໃຈ ໄພ່ພົນຂອງພຣະເຈົ້າຈະຕ້ອງຜ່ານຜ່າຕໍ່ບັນຫາດ້ວຍຄວາມເຊື່ອໝັ້ນ.

Martin Luther ຫົວໜ້າການປະຕິຮູບທາງສາສນາໃນ ສັຕະວັດທີ 16 ຄສ 1527 ທ່ານຄິດວ່າທ່ານອາດໝົດຄວາມຫວັງ. ທ່ານຖືກບາດເຈັບຢ່າງແສນສາຫັດຈາກການໂຕ້ຕອບຂອງສັດຕຣູບໍ່ວ່າທາງດ້ານຮ່າງກາຍແລະຝ່າຍຈິດວິນຍານ ໃນຄວາມຄິດທີ່ເປັນທຸກໜັກໃຈນັ້ນທ່ານໄດ້ອ່ານພຣະຄຳຂອງພຣະເຈົ້າໃນພຣະທັມ (ສຸພາສິດບົດທີ 46 ) ພຣະເຈົ້າຊົງເປັນທີ່ພັກອາສັຍແລະຊົງເປັນກຳລັງຂອງພວກຂ້ານ້ອຍໃນຍາມລຳບາກ. ພຣະອົງຊົງຕຽມພ້ອມຊ່ວຍເຫຼືອສເມີ ທ່ານໄດ້ຂຽນປຶ້ມຫົວນຶ່ງຊື່ວ່າ "**ພຣະເຈົ້າຊົງເປັນປ້ອມທີ່ໝັ້ນຄົງຂອງຂ້ານ້ອຍ**".

**3. <u>ຕອບສນອງດ້ວຍການນະມັສການພຣະເຈົ້າ</u>: (ພຣະນິມິດ 5:11-14)**

ທ່ານໂຢຮັນໄດ້ເປີດເຜີຍໃຫ້ເຮົາເຫັນເຖິງຣາຊນາຈັກຂອງພຣະເຈົ້າໃນຟ້າສວັນ. ທ່ານໄດ້ອະທິບາຍເຖິງປາກົດການສອງຢ່າງທີ່ທ່ານໄດ້ເຫັນແລະໄດ້ຍິນ ທ່ານໄດ້ເຫັນແລະໄດ້ຍິນເຖິງການນະມັສການພຣະເຈົ້າຂອງບັນດາສັດທັງສີ່ກັບພວກອາວຸໂສຊາວສີ່ທ່ານພ້ອມກັບທັງຝູງເທວະດາຈຳນວນຫລວງຫຼາຍ. ການສັຣເສີນນັ້ນແມ່ນການຖວາຍບັງຄົມພຣະເມສານ້ອຍຜູ້ທີ່ຖືກຂ້າແລ້ວນັ້ນເປັນຜູ້ສົມຄວນໄດ້ຮັບຣິດເດດ, ຊັບສົມບັດ, ສະຕິປັນຍາ, ອານຸພາບ, ກຽດຕິຍົດ, ສະງ່າຣາສີແລະຄຳສັຣເສີນ. ທ່ານໂຢຮັນໄດ້ບັນຍາຍເຖິງຄວາມສົມບູນແບບຂອງພຣະອົງ.

ໃນ( ຂໍ້13) ຂ້າພະ ເຈົ້າ ໄດ້ຍິນສິ່ງທີ່ມີຊີວິດທັງທັງໃນສວັນ, ເທິງແຜ່ນດິນໂລກ, ໃຕ້ແຜ່ນດິນແລະໃຕ້ມະຫາສມຸດກໍຮ່ວມກັນຖວາຍການສັຣເສີນ ພຣະອົງ. (ປະຖົມມະການ1:26-28) ພຣະເຈົ້າໄດ້ໃຫ້ມະນຸດເຮົາມີສິດອຳນາດເໜືອນສິ່ງທີ່ຊົງສ້າງທັງປວງທີ່ພຣະ ອົງຊົງສ້າງຂຶ້ນ ຫລັງຈາກມະນຸດຕົກຢູ່ໃນຄວາມບາບ ແລະຫລົງຫາຍໄປຈາກພຣະ ເຈົ້າແລ້ວຊັຍຊະນະແລະຄວາມລອດພົ້ນນີ້ໄດ້ມາທາງອົງພຣະເຢຊູຄຣິດ ຊຶ່ງນັ່ງໃນກ້ຳພຣະຫັດເບື້ອງຂວາຂອງພຣະອົງຜູ້ຊົງປະທັບເທິງບັນລັງນັ້ນ ຈຶ່ງສົມຄວນແກ່ການຍົກຍ້ອງສັຣເສີນ.

"ອາແມນ "ເປັນຄຳເວົ້າທີ່ໃຊ້ຕອບສນອງແລະພ້ອມທີ່ຈະຊຳຣະຕົນຕໍ່ພຣະອົງເຈົ້າ. ໃນການຖວາຍສັຣເສີນນະມັສການ ບໍ່ວ່າຈະເປັນການສ່ວນຕົວຫຼືທີ່ຊຸມນຸມ ຄຳວ່າ "ອາແມນ" ນັ້ນໃຫ້ເປັນຄຳທີ່ອອກມາຈາກຈິດໃຈສຳນຶກຂອງເຮົາຢ່າງແທ້ຈິງ. ການຕອບສນອງຂອງພວກເຮົາຕໍ່ພຣະຣາຊກິດການຊົງໄຖ່ຂອງອົງພຣະຄຣິດແມ່ນການສັຣເສີນ. ເມື່ອໄພ່ພົນຂອງພຣະອົງໄດ້ປະກາດແລະສັຣເສີນໃນຄຸນຄ່າແລະຄວາມຍິ່ງໃຫຍ່ຂອງພຣະອົງ, ບັນດາໄພ່ພົນທັງໝົດຂອງພຣະອົງຈຶ່ງກ່າວຄຳວ່າ "**ອາແມນ.**"

## ບົດຮຽນແຫ່ງຊີວິດ

ນິມິດທີ່ທ່ານໂຢຮັນໄດ້ເຫັນກ່ຽວກັບອົງພຣະເຢຊູ, ການຖວາຍກຽດແລະໄດ້ຮັບຣິດອຳນາດ ເປັນສຽງທີ່ພິພາກວິຈານເມື່ອຕົກມາເຖິງສມັຍນີ້. ນິມິດນັ້ນໄດ້ເປີດເຜີຍໃຫ້ເຫັນຊັຍຊະນະຂອງອົງພຣະຄຣິດຕໍ່ຄວາມບາບ, ຄວາມຕາຍ, ແລະຄວາມຊົ່ວຮ້າຍ. ໃນຖານະທີ່ພຣະອົງຊົງເປັນພຣະຜູ້ຊົງຄືນພຣະຊົນ, ພຣະອົງຊົງເປັນຜູ້ມີອຳນາດໃນສວັນແລະແຜ່ນໂລກ. ພຣະອົງເທົ່ານັ້ນທີ່ຊົງມີຄຸນຄ່າໃນຄວາມເຊື່ອແລະໃນການນະມັສການຂອງພວກເຮົາ.

ບັນດາຜູ້ທີ່ເຊື່ອອາດຈະມີຄວາມຕຶງຄຽດໃນຊ່ວງເວລາ "ດຽວນີ້" ແລະ "ເວລາທີ່ບໍ່ທັນມາເຖິງ." ພວກເຮົາຈະມີຄວາມຊົມຊື່ນຍິນດີແລະອົດທົນໄດ້ຢ່າງໃດ ໃນຂນະທີ່ພວກເຮົາຄອງຄອຍການສະເດັດກັບມາຂອງອົງພຣະເຢຊູ?

- ຈັດລຳດັບໄວ້ວ່າສິ່ງໃດຈະເຮັດກ່ອນແລະເຮັດຕາມຫລັງ ເພື່ອຈະໄດ້ເປັນທີ່ຍອມຮັບເມື່ອພຣະອົງຊົງປາກົດ.
- ສແວງຫາພຣະຄຣິດຢ່າງສຸດໃຈເພື່ອຈະໄດ້ຮັບພລັງແລະພຣະຄຸນ ເພື່ອຜ່ອນເບົາຊີວິດທີ່ຖືກທົດລອງ ຈົນກວ່າວັນນັ້ນຈະມາເຖິງ.
- ປະກາດຂ່າວປະເສີດຂອງອົງພຣະຄຣິດດ້ວຍຄວາມສັດຊື່ຕໍ່ຄົນທັງຫລາຍ ເພື່ອເຂົາເຈົ້າຈະໄດ້ກະກຽມໄວ້ໃນການສະເດັດກັບມາຂອງພຣະອົງ.
- ໃຫ້ຄົນອື່ນໄດ້ຮັບການຫນຸນນ້ຳໃຈ ເມື່ອເຂົາເຈົ້າເຫັນການດຳເນີນຊີວິດຂອງເຮົາທີ່ສັດຊື່ແລະເຊື່ອຫມັ້ນໃນອົງພຣະເຢຊູຄຣິດ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ແປໂດຍ VS